ASEAN AUSTRALIA SMART CITIES TRUST FUND
Asian Development Bank

Australian Government
Department of Foreign Affairs and Trade

ADB



# ກອງທຶນກໍ່ສ້າງນະຄອນອັດສະລິຍະ ອາຊຽນ-ອົດສະຕາລີ

## ສະໜັບສະໜູນການຫັນເປັນນະຄອນອັດສະລິຍະໃນ ຂົງເຂດອາຊີຕາເວັນອອກສຽງໃຕ້ໂດຍຜ່ານ ໂຊລູຊັ່ນແບບດີຈີຕອນ

ກອງທຶນກໍ່ສ້າງນະຄອນອັດສະລິຍະອາຊຽນ-ອົດສະຕາລີ (AASCTF) ໃຫ້ການຊ່ວຍເຫຼືອແກ່ຕົວເມືອງຕ່າງໆໃນ ASEAN ທີ່ໄດ້ຮັບການຄັດເລືອກເພື່ອປັບປຸງລະບົບການວາງແຜນ, ການໃຫ້ບໍລິການ ແລະ ການຄຸ້ມຄອງການເງິນດ້ວຍການພັດທະນາ, ການທົດສອບໂຊລູຊັ່ນ ແລະ ການປັບປຸງລະບົບຕົວເມືອງອັດສະລິຍະຢ່າງເໝາະສົມ. ໂດຍການເຮັດວຽກຮ່ວມກັບບັນດາຕົວເມືອງຕ່າງໆ, AASCTF ຊ່ວຍອຳນວຍຄວາມສະດວກໃຫ້ແກ່ການຫັນປ່ຽນໃຫ້ມີຄວາມອັດສະລິຍະ ແລະ ໜ້າຢູ່ຍິ່ງຂຶ້ນ - ດ້ວຍເຫດນີ້, ຈຶ່ງເຮັດໃຫ້ກາຍເປັນຕົວເມືອງທີ່ເປັນມິດກັບສິ່ງແວດລ້ອມຫຼາຍຂຶ້ນ, ມີຄວາມສາມາດໃນການແຂ່ງຂັນ, ໄດ້ຮັບການບູລະນະຢ່າງທົ່ວເຖິງເພື່ອເຮັດໃຫ້ວັດທະນະທຳ, ເສດຖະກິດ ແລະ ລະບົບນິເວດໃນຕົວເມືອງມີຄວາມສົດຊື່ນ, ເປັນເອກະລັກໃນຂົງເຂດພາກພື້ນອາຊຽນ, ມີຄວາມຈະເລີນຮຸ່ງເຮືອງ ແລະມີການພັດທະນາໄປພ້ອມໆກັນ.

AASCTF ໄດ້ຮັບການສ້າງຕັ້ງຂຶ້ນໃນ ເດືອນເມສາ 2019 ແລະເປັນກອງທຶນຊ່ວຍເຫຼືອແຫ່ງດຽວ ທີ່ໄດ້ຮັບການສະໜັບສະໜູນດ້ານເງິນທຶນຈາກລັດຖະບານປະເທດອົດສະຕາລີ, ໂດຍຜ່ານກະຊວງການຕ່າງປະເທດ ແລະ ການຄ້າ (DFAT), ຊຶ່ງໄດ້ຮັບການຄຸ້ມຄອງໂດຍ ທະນາຄານພັດທະນາອາຊີ (ADB), ແລະ ໄດ້ຮັບການຈັດຕັ້ງປະຕິບັດໂດຍ ບໍລິສັດທີ່ປຶກສາລະດັບໂລກ Ramboll.

### ຂໍ້ມູນດ້ານຕົວເລກຂອງກອງທຶນ

**2019–2024**
**ໄລຍະເວລາໂຄງການ**

**$13.95 ລ້ານໂດລາສະຫະລັດ**
**ເງິນທຶນທັງໝົດ**
(ຫຼື 20 ລ້ານໂດລາອົດສະຕາລີ)

**9 ຕົວເມືອງ**
**ບັນດາຕົວເມືອງທີ່ມີໂຄງການນຳທາງ**
(ແລະ 2 ແຜນງານລະດັບພາກພື້ນ)

### ສອດຄ່ອງກັບ

ກອບການວິເຄາະຕົວເມືອງອັດສະລິຍະຂອງ ADB ແລະ ຍຸດທະສາດການພັດທະນາຕົວເມືອງແບບຍືນຍົງ ຂອງອາຊຽນ

### ພັດທະນາ

ເຄືອຂ່າຍຕົວເມືອງອັດສະລິຍະອາຊຽນ

### ການນຳເອົາໂຊລູຊັ່ນດີຈີຕອນມາປັບໃຊ້ເພື່ອປັບປຸງໜ້າວຽກທີ່ສຳຄັນ

- ລະບົບການວາງແຜນ
- ການໃຫ້ບໍລິການ
- ການຄຸ້ມຄອງການເງິນ

### ວຽກງານທີ່ປິ່ນອ້ອມ

- ຄວາມເໜີພາບຍິງຊາຍ, ຄວາມບົກຜ່ອງທາງກາຍະພາບ, ແລະ ການມີສ່ວນຮ່ວມທາງສັງຄົມ
- ການປ່ຽນແປງສະພາບອາກາດ ແລະ ຄວາມຍືດຍຸ່ນ
- ການມີສ່ວນຮ່ວມຂອງພາກເອກະຊົນ

### ວິທີການສະໜັບສະໜູນ

ການສະໜັບສະໜູນຄູ່ຮ່ວມມືແລະ ເງິນລົງທຶນ

### ຮູບແບບການຈັດຕັ້ງປະຕິບັດ

ຈັດຕັ້ງປະຕິບັດໃຫ້ແທດເໝາະກັບສະພາບລວມຂອງບັນດາປະເທດອາຊຽນ

ອັບເດດ ວັນທີ 19 ກັນຍາ 2023

## ຕົວເມືອງໃດໃນ ASEAN ທີ່ໄດ້ຮັບການສະໜັບສະໜູນຈາກ AASCTF?

ປະຈຸບັນ AASCTF ກຳລັງເຮັດວຽກຮ່ວມກັບ 24 ຕົວເມືອງໃນ 8 ປະເທດ ອາຊຽນ. AASCTF ໃຫ້ການສະໜັບສະໜູນດ້ານວິຊາການ ແລະ ສະໜອງທຶນຊ່ວຍເຫຼືອໃນຫຼາຍຂະແໜງການອີງຕາມບູລິມະສິດຄວາມສຳຄັນຂອງ DFAT, ການລົງທຶນຂອງ ADB, ແລະ ຄວາມຕ້ອງການຂອງຕົວເມືອງຕ່າງໆ. ມີ 9 ຕົວເມືອງທີ່ໄດ້ຮັບການສະໜັບສະໜູນ, ແລະມີ 2 ໂຄງການລະດັບພາກພື້ນທີ່ເປີດໂອກາດໃຫ້ບັນດາຕົວເມືອງເຂົ້າຮ່ວມ AASCTF – ເຊິ່ງບາງຕົວເມືອງແມ່ນໄດ້ຈັດຕັ້ງປະຕິບັດສຳເລັດແລ້ວ ແລະ ບາງຕົວເມືອງຈະສຳເລັດພາຍໃນປີ 2023 ຫຼື ຕົ້ນປີ 2024. ຊຶ່ງປະກອບດ້ວຍຕົວເມືອງດັ່ງຕໍ່ໄປນີ້:

**ເມືອງມາກາດຊາ** (ອິນໂດເນເຊຍ)
ກອບການພັດທະນາຕົວເມືອງອັດສະລິຍະ ແລະ ໜ້າຢູ່ມາກາດຊາ

**ເມືອງບາກຽວ** (ຟິລິບປິນ)
ລະບົບແຈ້ງເຕືອນໄພນ້ຳຖ້ວມ, ການໃຫ້ຂໍ້ມູນຂ່າວສານ ແລະ ການຫຼຸດຜ່ອນຜົນກະທົບຈາກໄພນ້ຳຖ້ວມແບບອັດສະລິຍະຂອງເມືອງບາກຽວ, ເຊິ່ງລະບົບດັ່ງກ່າວໄດ້ເຊື່ອມແອັບ ປິດບາດຍິງຊາຍເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາ, ການປະຍຸກໃຊ້ ແລະ ການຈຳລອງສະຖານະການຂອງເມືອງບາກຽວ FEWS.

**ນະຄອນໄກສອນ ພົມວິຫານ** (ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ)
ສ້າງພື້ນຖານເພື່ອຍົກລະດັບຈ້າງງານໂດຍການນຳໃຊ້ເຄື່ອງມື ແລະ ສື່ການຮຽນຮູ້ທາງອອນລາຍ (ໄລຍະທີ 1) ແລະ ເພື່ອເປັນການເສີມສ້າງທັກສະການຈ້າງງານໃຫ້ແກ່ໄວໜຸ່ມ.

**ເມືອງປີນັງ** (ມາເລເຊຍ)
ການພັດທະນາຮູບແບບສະຖານະການຈຳລອງຂະໜາດນ້ອຍແບບອັດສະລິຍະ

**ເມືອງພະຕະບອງ** (ກຳປູເຈຍ)
ການຄຸ້ມຄອງການເງິນທີ່ຕິດພັດກັບການຈັດການຂີ້ເຫຍື້ອແບບອັດສະລິຍະ

**ເມືອງເວ້** (ຫວຽດນາມ)
ແຜນແມ່ບົດສຳລັບຕົວເມືອງອັດສະລິຍະແບບດີຈີຕອນ

**ແລວທາງເສດຖະກິດພາກຕາເວັນອອກ** (ປະເທດໄທ)
ການປະເມີນວິໄສທັດຕົວເມືອງ ແລະ ພື້ນຖານຂໍ້ມູນດ້ານຍຸດທະສາດໃນຕົວເມືອງ

**ນະຄອນຫຼວງພະບາງ** (ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ)
ການທ່ອງທ່ຽວ, ມໍລະດົກ ແລະ ຜັງເມືອງທີ່ມີການປະສົມປະສານ ແລະ ຄວາມອັດສະລິຍະ

**ເມືອງດາເວົາ** (ຟິລິບປິນ)
ການຝຶກອົບຮົມຜູ້ຂັບລົດເມດາເວົາ & ການສຶກສາເຕັກໂນໂລຊີ– ການກະ ກຽມໂຄງການທົດລອງ & ສະໜັບສະໜູນການຈັດຕັ້ງປະຕິບັດ

### ແຜນງານລະດັບຂົງເຂດພາກພື້ນ

- ການພັດທະນາຂັ້ນພື້ນຖານ ແລະ ການເສີມສ້າງຄວາມສາມາດສຳລັບບັນດາຕົວເມືອງທີ່ເຂົ້າຮ່ວມໂຄງການ AASCTF
- ຕົວເມືອງອັດສະລິຍະ - ແຜນງານການເສີມສ້າງຄວາມສາມາດຂອງຕົວເມືອງທີ່ເຂົ້າຮ່ວມໂຄງການ AASCTF

## ຈະມີສ່ວນຮ່ວມກັບ AASCTF ໄດ້ຄືແນວໃດ?

**1 ແບ່ງປັນແນວຄວາມຄິດຂອງທ່ານ ແລະ ໂຕ້ຕອບກັບພວກເຮົາທາງສື່ສັງຄົມ**

AASCTF ເຊື່ອໝັ້ນໃນການອອກຄຳຄິດເຫັນຂອງປະຊາຊົນ. ຕິດຕາມພວກເຮົາໄດ້ທາງ X, LinkedIn, ແລະ Facebook ເພື່ອເບິ່ງ, ໂຕ້ຕອບ ແລະ ສະແດງຄຳຄິດເຫັນກ່ຽວກັບຂໍ້ມູນທີ່ໄດ້ນຳສະເໜີ.

**2 ຮັບຂໍ້ມູນຂ່າວສານກ່ຽວກັບ AASCTF**

ຕິດຕາມຂ່າວສານໃຫມ່ໆກ່ຽວກັບການພັດທະນາຕົວເມືອງອັດສະລິຍະທີ່ໜ້າຢູ່ໂດຍການກົດຕິດຕາມເພື່ອຮັບຂໍ້ມູນຂ່າວສານກ່ຽວກັບ.

**3 ເຂົ້າຮ່ວມການສຳມະນາຜ່ານເວັບ, ການສົນທະນາ ແລະ ກິດຈະກຳອື່ນໆຂອງ AASCTF**

ເພື່ອຂັບເຄື່ອນຄວາມເປັນຜູ້ນຳດ້ານຄວາມຄິດ ແລະ ສ້າງສິນແຮງບັນດານໃຈໃນການດຳເນີນການ, AASCTF ຈຶ່ງໄດຈັດກິດຈະກຳ ແລະ ເຂົ້າຮ່ວມການປະຊຸມ ຫຼື ການປະຊຸມໃນລະດັບທ້ອງຖິ່ນ ແລະ ລະດັບສາກົນ.

**4 ລົງທະບຽນເພື່ອຮັບໂປຣແກຣມການຝຶກອົບຮົມ ແລະ ການສ້າງຂີດຄວາມສາມາດ**

AASCTF ໃຫ້ການສະໜັບສະໜູນການປ່ຽນແປງທີ່ທ້ອງຖິ່ນເປັນເຈົ້າການ, ແລະ ດ້ວຍກິດຈະກຳການພັດທະນາຄວາມສາມາດຂອງພວກເຮົາ, ທ່ານຈະມີພະລັງໃນການເປັນຜູ້ນຳໂຊລູຊັນແບບອັດສະລິຍະ.

**5 ການລົງທະບຽນໃນຫຼັກສູດການຮຽນຮູ້ທາງອອນລາຍ**

ບັນດາຫຼັກສູດເຫຼົ່ານີ້ແມ່ນວິທີການໜຶ່ງໃນການເຮັດໃຫ້ທຸກຄົນສາມາດເຂົ້າເຖິງການຫັນເປັນຕົວເມືອງອັດສະລິຍະ. ບັນດາຫຼັກສູດເຫຼົ່ານີ້ແມ່ນຟຣີ ແລະ ມີຢູ່ໃຫ້ໃນທາງເວັບໄຊ ADB eLearn. ພຽງແຕ່ທ່ານລົງທະບຽນ.














**ສຳລັບສອບຖາມຂໍ້ມູນ**

**ກອງເລຂາ** AASCTF
ພະແນກອາຊີຕາເວັນອອກສຽງໃຕ້
ທະນາຄານພັດທະນາອາຊີ
AASCTF@adb.org


**ຕິດຕາມພວກເຮົາໄດ້ທາງສື່ສັງຄົມອອນລາຍ**

AASCTF | @aasctf | @AASCTF | @aasctf

**ຄູ່ຮ່ວມການຈັດຕັ້ງປະຕິບັດງານທັກ:**

RAMBOLL

ສະແກນເພື່ອດາວໂຫຼດເອກະສານ

https://bit.ly/AASCTF-Lao